ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 388 /ທຄຕລ . 2017 .
ນະຄອນຫຼວງວຽງຈັນ, ວັນທີ: 26/09/2017

# ແຈ້ງການ

**ເຖິງ:** ຜູ້ທີ່ມີຄວາມສົນໃຈສະໝັກເຮັດວຽກກັບ ທຄຕລ ທຸກທ່ານ
**ເລື່ອງ:** ການສອບເສັງເຂົ້າເຮັດວຽກທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

- ເພື່ອເປັນການສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ;
- ເພື່ອເປັນການສ້າງສະຕິລະວັງຕົວ ບໍ່ໃຫ້ຫຼົງເຊື່ອກຸ່ມຄົນບໍ່ຫວັງດີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາທ່ານຜູ້ທີ່ສົນໃຈສະໝັກເຮັດວຽກກັບ ທຄຕລ ໃຫ້ມີສະຕິລະວັງຕົວ ຢ່າໄດ້ຫຼົງເຊື່ອກຸ່ມຄົນບໍ່ດີ ທີ່ມີເຈດຕະນາແອບອ້າງວ່າສາມາດຊ່ວຍ ຫຼື ຂໍນະໂຍບາຍໃຫ້ຜູ້ສະໝັກເພື່ອໃຫ້ສາມາດຜ່ານ ແລະ ບັນຈຸເຂົ້າເປັນພະນັກງານ ທຄຕລ ໄດ້ ໂດຍຕ້ອງໄດ້ຈ່າຍເງິນເປັນຈຳນວນທີ່ມີມູນຄ່າສູງນັ້ນ, ການກະທຳດັ່ງກ່າວຖືເປັນປະກົດການຫຍໍ້ທໍ້ອັນໜຶ່ງໃນສັງຄົມ ທີ່ໄດ້ສ້າງຄວາມເສຍຫາຍ ໃຫ້ແກ່ຊື່ສຽງ ແລະ ພາບພົດຂອງການຈັດຕັ້ງ ທຄຕລ.

ການສະໝັກວຽກຢູ່ ທຄຕລ ແມ່ນປະຕິບັດຕາມຂັ້ນຕອນ ແລະ ລະບຽບຂອງການສອບເສັງທີ່ ທຄຕລ ວາງອອກຢ່າງເຄັ່ງຄັດ. ຜູ້ສະໝັກທີ່ມີເງື່ອນໄຂຄົບຖ້ວນ ແລະ ຖືກຕ້ອງຕາມມາດຖານການປະກາດເທົ່ານັ້ນຈຶ່ງຈະສາມາດປະກອບຟອມສະໝັກວຽກໄດ້. ຫຼັງຈາກນັ້ນ ກໍມີການຄັດແບບຟອມ, ຈັດຕັ້ງການສອບເສັງ ແລະ ສຳພາດ ເຊິ່ງ ທຄຕລ ຈະພິຈາລະນາຄັດເລືອກຜູ້ທີ່ສອບເສັງຜ່ານໂດຍອີງໃສ່ຄວາມຮູ້, ຄວາມສາມາດຕົວຈິງຂອງຜູ້ສະໝັກ ແລ້ວລາຍງານຕໍ່ຄະນະຜູ້ບໍລິຫານຂອງທະນາຄານຊາບ ເພື່ອອອກຂໍ້ຕົກລົງຮັບຮອງເອົາພະນັກງານຕາມລຳດັບ.

ທຄຕລ ມີຄວາມຕັ້ງໃຈ ແລະ ຕ້ອງການເພື່ອນຮ່ວມງານ ຜູ້ມີຄວາມຮູ້, ຄວາມສາມາດ ທີ່ຈະມາຊ່ວຍສ້າງສາພັດທະນາ ທຄຕລ ໄປພ້ອມໆກັນ. ຖ້າຫາກທ່ານໃດມີຂໍ້ມູນຄວາມຈິງກ່ຽວກັບການກະທຳບໍ່ດີທີ່ໄດ້ກ່າວມາຂ້າງເທິງນັ້ນ ສາມາດແຈ້ງມາຍັງພະແນກຈັດຕັ້ງ-ພະນັກງານ, ທຄຕລ ສຳນັກງານໃຫຍ່ ໂທ: 021 213200 ຕໍ່ 417-418 ຫຼື ທຄຕລ ສາຂາຕ່າງໆໃນຂອບເຂດທົ່ວປະເທດ.

ດ້ວຍເຫດນີ້, ຈຶ່ງແຈ້ງມາຍັງບັນດາທ່ານຊາບເພື່ອເປັນປະໂຫຍດ ແລະ ມີສະຕິລະວັງຕົວໃນການພິຈາລະນາຮັບຂໍ້ມູນຂ່າວສານດ້ວຍ.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ